**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

# ຂໍ້ແນະນຳ

# ເຕັກນິກການປູກໝາກແຕງກວາ



ເອກະສານ ປະກອບການຝຶກອົບຮົມ 10:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເໜີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງໝາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບູອກໂຄລີ
3. ເຕັກນິກການປູກຜັກກະລໍ່າປີ
4. ເຕັກນິກການປູກຜັກກະລໍ່າດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຢວກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຂີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 10 :
# ແນະນຳເຕັກນິກການປູກໝາກແຕງກວາ

## ສາລະບານ

ໝາກແຕງກວາ (Cucumber)........................................................2
ລັກສະນະທົ່ວໄປ .............................................................................. 2
ພັນທີ່ໃຊ້ປູກ ......................................................................................3
ການກຽມໜານປູກ ...........................................................................4
ການປູກ ...........................................................................................4
ການບົວລະບັດຮັກສາ .......................................................................5
ການເກັບກ່ຽວ ..................................................................................6

## ການພອນດິນກຳຈັດຫຍ້າ

ຄວນເຮັດໃນໄລຍະທຳອິດ ເພື່ອເຮັດໃຫ້ດິນລຸລ່ວງຜຸຜ່ຽງລະບາຍອາກາດ ແລະ ນ້ຳໄດ້ດີພ້ອມກັບການກຳຈັດຫຍ້າໄປພ້ອມໆກັນ. ເມື່ອຕົ້ນພືດມີໃບປົກຄຸມດິນແລ້ວ ບໍ່ຈຳເປັນເຮັດເລີຍ.

## ການເກັບກ່ຽວ

ສ່ວນຫຼາຍອາຍຸການເກັບກ່ຽວໝາກແຕງກວາປະມານ 30 ຫາ 45 ວັນ ທັງນີ້ຂື້ນຢູ່ກັບແຕ່ລະພັນ. ການເກັບກ່ຽວໃຫ້ເກັບໝາກອ່ອນທີ່ມີສີຂຽວສົດ ເກັບທຸກວັນຈົນກວ່າໝາກແຕງຈະໝົດເກັບແລ້ວ ຮີບນຳເຂົ້າຮົ່ມຫ້າມລ້າງນ້ຳເພາະວ່າຈະເຮັດໃຫ້ເຫຼືອງໄວ. ຫຼັງຝົນຕົກໃໝ່ໆ ບໍ່ຄວນເຂົ້າໄປເກັບລໍໃຫ້ດິນແຫ້ງດີເສຍກ່ອນ.

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

# ການບົວລະບັດຮັກສາ

## ການໃສ່ຝຸ່ນ

ເນື່ອງຈາກໝາກແຕງກວາ ເປັນຜັກກິນໝາກ ຕ້ອງການຝຸ່ນຫຼາຍພໍສົມຄວນ. ດັ່ງນັ້ນ, ການກຳນົດຝຸ່ນເພື່ອນຳໃຊ້ແມ່ນມີຄວາມຈຳເປັນໃຫ້ຖືກຕ້ອງແນໃສ່ການລຸດຕົ້ນທຶນການຜະລິດ ແລະ ໃຫ້ມີປະສິດທິຜົນສູງດ້ານຜົນຜະລິດ ໂດຍສະເພາະດ້ານການຈະເລີນເຕີບໂຕທາງລຳຕົ້ນດອກ ແລະ ໝາກ. ດັ່ງນັ້ນ, ຈຶ່ງແນະນຳໃຫ້ໃຊ້ ຝຸ່ນ N:P:K ສູດ 14_14_21; 13_13_21 ຫຼື ສູດທີ່ໃກ້ຄຽງກັນນີ້ ໃນຈຳນວນ 300 ກິ ໂລ/ເຮັກຕາ ໂດຍແບ່ງໃສ່ 3 ເທື່ອ: ເທື່ອທີ່1: ໃສ່ເຄິ່ງນຶ່ງ ເປັນຝຸ່ນຮອງພື້ນຕອນປູກ ແລ້ວພວນດິນປົກ. ເທື່ອທີ່2: ໃຫ້ໃສ່ ເມື່ອພືດມີອາຍຸປະມານ 10 ຫາ 20 ວັນ ຈຳນວນເຄິ່ງນຶ່ງຈາກສ່ວນທີ່ເຫຼືອຄັ້ງທຳອິດ ພ້ອມນີ້ອາດຈະເພີ່ມຝຸ່ນຢູເຣັຍ 80 ຫາ 100ກລ/ຮຕ ເພື່ອເລັ່ງການຈະເລີນເຕີບໂຕລຳຕົ້ນ ແລະ ໃບ. ເທື່ອທີ່ 3 ໃສ່ເມື່ອອາຍຸໄດ້ 25 ຫາ 30 ວັນ ຈາກສ່ວນທີ່ເຫຼືອ ທີ່ໄດ້ກຳນົດໄວ້ໃນເບື້ອງຕົ້ນນັ້ນ.

## ການໃຫ້ນ້ຳ

ຄວນໃຫ້ຢ່າງພຽງພໍ ໂດຍເບິ່ງຄວາມຊຸ່ມຊື່ນໃນ ໜານປູກ ແຕ່ຢ່າໃຫ້ປຽກເກີນໄປຈະເຮັດໃຫ້ຮາກພືດເນົ່າ.





# ຂໍ້ແນະນຳເຕັກນິກການປູກໝາກແຕງກວາ



## ໝາກແຕງກວາ (Cucumber)

ເປັນຜັກທີ່ໃຊ້ບໍລິໂພກໝາກ ເປັນພືດຜັກທີ່ປູກງ່າຍໃຫຍ່ໄວໃຫ້ໝາກໄວສາມາດນຳມາປຸງແຕ່ງເປັນອາຫານ ຫຼື ປະກອບໃນການປຸງແຕ່ງອາຫານໄດ້ຫຼາຍຢ່າງ.

## ລັກສະນະທົ່ວໄປ

ໝາກແຕງກວາ ເປັນພືດຜັກທີ່ສາມາດປູກໄດ້ຕະຫຼອດປີຢູ່ໃນຕະກຸນ Cucurbita-ceae ມີຊື່ທາງວິທະຍາສາດວ່າ Cucumis sativus Linn. ແຕງກວາເປັນພືດປີດຽວ (Annual) ມີລຳຕົ້ນເປັນເຄືອຍາວປະມານ 2 ຫາ 3 ແມັດ ມີມືທາວຂຶ້ນຕາມຄ້າງ. ໂດຍທົ່ວໄປແຕງກວາມີດອກຜູ້ ແລະດອກແມ່ ແຍກກັນຢູ່ແຕ່ລະດອກພາຍໃນຕົ້ນດຽວກັນດອກມີສີເຫຼືອງ. ອາຍຸຕັ້ງແຕ່ປອດເມັດຫາເກັບກ່ຽວປະມານ 30 ຫາ 45 ວັນ. ແຕງກວາສາ

ມາດຂຶ້ນໄດ້ໃນດິນເກືອບທຸກສະນິດ ແຕ່ມັກຊາຍແກມຕົມປະຕິກິລິຍາຂອງດິນ (pH) 5.5 ຫາ 6.8 ດິນມີຄວາມຊຸ່ມປານກາງສາມາດລະບາຍນ້ຳໄດ້ດີ ນ້ຳບໍ່ຂັງ ອຸ່ນຫະພູມເໝາະສົມປະມານ 18 ຫາ 25˚C.

## ແນວພັນທີ່ໃຊ້ປູກ

ແນວພັນໝາກແຕງກວາໃຊ້ປູກໂດຍທົ່ວໄປ ໄດ້ຈັດເປັນປະເພດ:

- **ພັນສຳລັບບໍລິໂພກສົດ:** ມີທັງພັນພື້ນເມືອງ ແລະພັນປັບປຸງ ເປັນພັນທີ່ມີຊີ້ນບາງໃສ້ໃຫຍ່ ມີນ້ຳຫຼາຍ ສີຂອງເປືອກຂຽວຈາງເວລາໝາກຍັງອ່ອນຈະມີໜາມເຕັມໄປໝົດ ເມື່ອໝາກຈະເລີນເຕີບໂຕດີແລ້ວໜາມຈະຫຼົ່ນອອກ (ມີທັງໜາມສີຂາວ ແລະສີດຳ) ສາມາດເອົາມີລູບອອກໄດ້ ໝາກແຕງກວາ ທີ່ມີໜາມສີຂາວຈະມີຄຸນນະພາບໃນການເກັບຮັກສາໄດ້ດົນ ປະມານ 7 ວັນ, ແຕ່ໝາກແຕງກວາທີ່ມີໜາມສີດຳ ເກັບຮັກສາໄດ້ ປະມານ 2 ຫາ 3 ວັນ ໝາກກໍຈະເລີ່ມເຫຼືອງ.
- **ພັນສຳລັບອຸດສາຫະກຳ:** ເປັນພັນທີ່ມີຊີ້ນໜາໃສ້ນ້ອຍ ຫຼືບາງເປືອກສີຂຽວເຂັ້ມ ເມື່ອນຳໄປດອງຈະຮັກສາລັກສະນະຮູບຊົງໄວ້ໂດຍບໍ່ຫຽວຫຍຸບ.



## ການຕຽມດິນໜານປູກ

ຄວນໄຖ_ຂຸດດິນເລິກປະມານ 20 ຫາ 25 ຊຕມ. ຕາກດິນໄວ້ ປະມານ 5 ຫາ 7 ວັນ ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມທີ່ສະຫຼາຍຕົວດີແລ້ວປະມານ 12 ໂຕນ/ເຮັກຕາ ເພື່ອຊ່ວຍປັບປຸງສະພາບຂອງດິນ ແລະ ເພີ່ມຄວາມອຸດົມສົມບູນຂອງດິນໃຫ້ດີຂຶ້ນ. ພວນດິນໃຫ້ນ້ອຍລົງແຕ່ຢ່າໃຫ້ມຸ່ນຫຼາຍຖ້າດິນເປັນກົດຄວນໃສ່ປູນຂາວ. ເກັບຫຍ້າອອກ ປັບໜ້າດິນໃຫ້ຮາບພຽງ.

## ການປູກ

ຖ້າປູກໝາກແຕງກວາ ໂດຍບໍ່ເຮັດຄ້າງ ປ່ອຍໃຫ້ມັນເລືອໄປຕາມດິນ ໃຊ້ໄລຍະລະຫວ່າງ ຕົ້ນ 50 ຊຕມ. ລະຫວ່າງແຖວ 150 ຊຕມ. ຖ້າປູກໃຊ້ຄ້າງໄລຍະຕົ້ນ 50 ຊຕມ. ໄລຍະແຖວ 100 ຊຕມ. ຫຼັງຈາກຕຽມດິນຮຽບຮ້ອຍແລ້ວ ໃຫ້ຈັດໄລຍະລະຫວ່າງຕົ້ນ ແລະ ແຖວຕາມທີ່ກ່າວມາແລ້ວນັ້ນໃຫ້ຢອດເມັດລົງໃນຂຸມໆ 5 ຫາ 10 ເມັດ ເລິກລົງໄປໃນດິນ 2.5 ຊຕມ. ປົກດ້ວຍຝຸ່ນຄອກ ຫຼື ຝຸ່ນບົ່ມ ຫຼື ດິນລະອຽດລົງຂຸມຈົນເຕັມ ຫົດນ້ຳໃຫ້ປຽກປົກດ້ວຍເຟືອງແຫ້ງ. ກ່ອນຢອດເມັດຄວນໃຊ້ຢາປ້ອງກັນແມງໄມ້ເສຍກ່ອນ. ເມື່ອຕົ້ນງອກມີໃບແທ້ສອງໃບ ຄວນຖອນແຍກຕົ້ນທີ່ອ່ອນແອອອກ ໃຫ້ເຫຼືອຂຸມລະ 1 ຕົ້ນ. ຫຼັງຈາກປູກໄດ້ 14 ວັນ ໝາກແຕງກວາເລີ່ມເລືອຖ້າປູກແບບຄ້າງຄວນເຮັດຄ້າງເລີຍ ເພື່ອໃຫ້ເຄືອເລືອຂຶ້ນປັກ ແລະ ໂຮບປາຍໄມ້ເຂົ້າຫາກັນ ມັດເຊືອກໃຫ້ແໜ້ນແລ້ວມັດໄມ້ຂວາງອີກ 2 ຫາ 3 ອັນ.